Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 172-182
https://doi.org/10.69692/SUJMRD100172

# Factors that Affect Creating of Competitive Advantage for Trade Business in Xayabury District, Xayabury Province

**Xayyana SOUKPHALY [1], Thongphanh CHANTHAVONE[2] and Phayvanh PHOUNNALY[3].**
*Department of Business Management, Faculty of Economic and Tourism, Souphanouvong University Lao PDR*

[1]***Correspondence:*** *Xayyana SOUKPHALY, Finance department of Xayabury province, Tel: +8562055939939, Email: xaysanaboupary@gmail.com.*
[2]*Department of Economics Souphanouvong, University, Tel: +8562057188999, E-mail: Thongphanh@su.edu.la.*
[3]*Financial office, Rector's office, Souphanouvong University, Tel: +8562022350340, E-mail:phounnaly@gmail.com*

***Submitted: July 15, 2024***
***Revised: August 07, 2024***
***Accepted: August 14, 2024***

## Abstract

The purposes of study were: 1) to study trade business competition situation of entrepreneurs, 2) to study a creation of a competitive advantage for trade business of entrepreneurs, and 3) to investigate factors that affect a creation of a competitive advantage for trade business in Xayabury district, Xayabury province. The research sample was 160 peoples from trade business of entrepreneurs by using questionnaires as data collection instrument and statistics were used to analyze frequency, percentage, mean, standard deviation and stepwise multiple linear regression.

The research found that: 1) trade business in Xayabuly City, Xayabuly Province, faces moderate competitive pressure with the strongest force coming from existing competitors within the industry, followed by the pressure from the entry of new competitors, the bargaining power of suppliers of goods/raw materials, the bargaining power of buyers, and lastly, the threat of substitute goods. 2) The creation of a competitive advantage of trade business entrepreneurs in in Xayabuly City, Xayabuly Province is at a high level, the highest mean is the trading business difference in bringing new commodities different from the competitors to the market to satisfy the customers. To quickly response to the needs of clients, it is necessary for the trading businesses to present new products. Trading businesses need to emphasize targeting markets by building good collaboration and friendship with clients. Trading business need to have a strategy in lowering operation costs by using resources effectively. 3) Factors affecting the creation of a competitive advantage for trading business in Xayabury district, Xayabury province, consist of six factors such as: proactive factor, current competitor factors, competitive strength factors, risk tolerance factors, political-legal factors and threat factors from substitute products. These factors are directly interconnected with the creation of a competitive advantage, except, political-legal factors of the entrepreneurs in Xayabuly District, Xayabuly Province.

**Keyword:** Characteristics of entrepreneurship, competitive factors, external environmental factors, competitive advantages

## 1. ພາກສະເໜີ

ລັດຖະບານ ສປປ ລາວ ໄດ້ໃຫ້ຄວາມສຳຄັນ ໃນສົ່ງເສີມ ແລະ ພັດທະນາຜູ້ປະກອບການກິດການ ໃນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໂດຍສະເພາະຂະແໜງການຄ້າ ຄື: (1) ສົ່ງເສີມພາກສ່ວນຕ່າງໆ ສ້າງສູນຝຶກ ແລະ ຝຶກອົບຮົມເພື່ອສ້າງ ແລະ ພັດທະນາຜູ້ປະກອບການກິດຈະການ ເພດຍິງ, ໄວໜຸ່ມ ແລະ ຄົນພິການ ໃຫ້ຮູ້ກ່ຽວກັບການເລີ່ມຕົ້ນ ແລະ ດຳເນີນກິດຈະການໃນຮູບແບບຕ່າງໆ; (2) ສົ່ງເສີມ ແລະ ເງື່ອນໄຂ ໃຫ້ເກີດມີຮູບແບບລາຍໃໝ່, ທຸລະກິດແຟຣນຊາຍ, ທຸລະກິດເພື່ອສັງຄົມ ແລະ ຮູບແບບອື່ນ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບການກິດຈະການໃໝ່; (3) ໃຫ້ການຊ່ວຍເຫຼືອຜູ້ປະກອບການໃນການພັດທະນາຕົນເອງດ້ວຍການຈັດຝຶກອົບຮົມ, ສະ ໜອງທຶນສົມທົບ ຫຼື ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ທັງພາຍໃນ ແລະ ຕ່າງປະເທດ; (4) ສ້າງ ແລະ ບັນຈຸການຮຽນຮູ້ກ່ຽວກັບການປະກອບກິດຈະການ ເຂົ້າໃນຫຼັກສູດໃນລະບົບການສຶກສາ; (5) ສົ່ງເສີມການຈັດກິດຈະກຳກ່ຽວກັບການສ້າງຜູ້ປະກອບກິດຈະການ ເຊັ່ນ: ການແຂ່ງຂັນແຜນທຸລະກິດ, ຈຳລອງການປະກອບກິດຈະການ ແລະ ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ ( Ministry of industry and commerce of Lao PDR, 2022).

ປີ 2022 ສະພາບເສດຖະກິດຂອງໂລກ ມີຄວາມຜັນຜວນຢ່າງສັບສົນ, ເສດຖະກິດຫຼາຍປະເທດຍັງສືບຕໍ່ບໍ່ມີສະຖຽນລະພາບ ແລະ ສົງຄາມຂັດແຍ່ງລະຫວ່າງປະເທດມະຫາອຳນາດທາງດ້ານເສດຖະກິດ. ພ້ອມກັນນັ້ນ, ສປປ ລາວ ຍັງປະສົບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເປັນຕົ້ນແມ່ນຄວາມຜັນຜ່ວນຂອງລາຄານ້ຳມັນ, ການຜັນຜວນຂອງເງິນຕາ, ສະພາບການຂາດດູນງົບປະມານ, ບັນຫາການເພີ່ມຂຶ້ນຂອງສິນຄ້າ ແລະ ອັດຕາເງິນເຟີ້. ພ້ອມນັ້ນ ແຂວງໄຊຍະບູລີ ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ເປັນຕົ້ນໄພນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ສັດຕູພືດທຳລາຍຜົນລະປູກ ເຊິ່ງສົ່ງຜົນຕໍ່ການຜະລິດຂອງປະຊາຊົນ ແລະ ຜູ້ປະກອບການໃນການດຳເນີນທຸລະກິດ ໃນແຂວງໄຊຍະບູລີ. ຕໍ່ກັບສະພາບການຄວາມທ້າທາຍດັ່ງກ່າວນັ້ນ ລັດຖະບານໄດ້ສຸມໃສ່ຈັດຕັ້ງປະຕິບັດວາລະແຫ່ງແຫ່ງຊາດວ່າດ້ວຍການແກ້ໄຂຄວາມທຸກຍາກທາງດ້ານເສດຖະກິດ (2021-2023) ເຊິ່ງໄດ້ສ້າງເງື່ອນໄຂໃຫ້ເສດຖະກິດຂອງແຂວງໄຊຍະບູລີ ມີການຂະຫຍາຍຕົວ 4.90%. ຂະແໜງອຸດສາຫະກຳ ແລະ ການຄ້າ ບັນລຸເຖິງ 4,688.82 ຕື້ກີບ ໂດຍເພີ່ມຂຶ້ນຈາກປີຜ່ານມາ 21.24% ເຊິ່ງມູນຄ່າການສົ່ງອອກສິນຄ້າ 1,809.56 ຕື້ກີບ ແລະ ມູນຄ່າສິນຄ້ານຳເຂົ້າ 1,781.04 ຕື້ກີບ. ໃນນີ້ ມູນຄ່າການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດ 730.74 ຕື້ກີບ ໂດຍເພີ່ມຂຶ້ນຈາກປີຜ່ານມາ 15.56% ເຊິ່ງການລົງທຶນຂອງພາກເອກະຊົນພາຍໃນ 568.11 ຕື້ກີບ ແລະ ການລົງທຶນຂອງພາກເອກະຊົນພາຍໃນ 162.63 ຕື້ກີບ (Bank of the Lao PDR Northern Province of Luang Prabang, 2022).

ຈາກແຜນພັດທະນາເສດຖະກິດສັງຄົມ ແລະ ສະພາບເສດຖະກິດປັດຈຸບັນ ລັດຖະບານ ໄດ້ເປີດໂອກາດຫຼາຍຂຶ້ນໃນການດຳເນີນທຸລະກິດຂອງຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນ ສປປ ລາວ ແຕ່ໃນຂະນະດຽວກັນການດຳເນີນທຸລະກິດຈະກໍ່ໃຫ້ເກີດຄວາມສ່ຽງຕໍ່ການດຳເນີນທຸລະກິດ ເຊິ່ງຜູ້ປະກອບການທຸລະກິດຕ້ອງມີການກຳນົດຍຸດທະສາດເພື່ອສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນ ມາໃຊ້ໃນທຸລະກິດຢ່າງເໝາະສົມ ແລະ ແຕກຕ່າງຈາກຄູ່ແຂ່ງຂັນ ໂດຍຍຸດທະສາດການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນມີການໃຊ້ເຄື່ອງມືໃນການວິເຄາະ, ການສຳຫຼວດສະພາບແວດລ້ອມທາງດ້ານການແຂ່ງຂັນ ໂດຍມີຮູບແບບການວິເຄາະການແຂ່ງຂັນໃນອຸດສາຫະກຳຄື ຄູ່ແຂ່ງຂັນທີ່ມີຢູ່ແລ້ວ, ອຳນາດຕໍ່ລອງຂອງຜູ້ສະໜອງ, ອຳນາດຕໍ່ລອງຂອງຜູ້ຊື້, ໄພຄຸກຄາມຈາກຜູ້ແຂ່ງຂັນລາຍໃໝ່, ໄພຄຸກຄາມຈາກສິນຄ້າທົດແທນ (Porter & Milar, 1985). ຮ່ວມກັບການວິເຄາະ SWOT ເຊິ່ງປະກອບໄປດ້ວຍຈຸດແຂ່ງປະກອບດ້ວຍຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ອຸປະສັກ (Navikarn, 2002) ໂດຍອີງໃສ່ປັດໄຈສ່ວນປະສົມທາງການຕະຫຼາດ ເຊິ່ງປະກອບມີ: ດ້ານຜະລິດຕະພັນ, ດ້ານລາຄາ, ດ້ານຊ່ອງທາງການຈັດຈຳໜ່າຍ ແລະ ດ້ານການສົ່ງເສີມການຕະຫຼາດ (Kotler, 2003) ເປັນປັດໄຈທີ່ສົ່ງຜົນຕໍ່ການນຳໃຊ້ເຕັກນິກມາໃຊ້ໃນການສ້າງຄວາມໄດ້ປຽບໃນການແຂ່ງຂັນທີ່ອີງກອນຕ້ອງສ້າງຄວາມແຕກຕ່າງຈາກຄູ່ແຂ່ງ ໃນ 3 ດ້ານປະກອບດ້ວຍຍຸດທະສາດການສ້າງຄວາມແຕກຕ່າງ, ຍຸດທະສາດການເປັນຜູ້ນຳດ້ານຕົ້ນ

Souphanouvong University Journal of Multidisciplinary Research and Development
2024, Vol: 10, No: 3, 172-182
https://doi.org/10.69692/SUJMRD100172

ທຶນ ແລະ ຍຸດທະສາດການຕອບສະໜອງທີ່ວ່ອງໄວກວ່າຄູ່ແຂ່ງຂັນ (Porter, 2005).

ທຸລະກິດການຄ້າເປັນຂະແໜງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ມີບົດບາດສຳຄັນ ໃນພື້ນຖານພັດທະນາທີ່ຍັ້ງຢືນ, ເປັນກົນໄກໃນພື້ນຖານທາງດ້ານເສດຖະກິດ ແລະ ເສີມສ້າງຄວາມກ້າວໜ້າທາງດ້ານເສດຖະກິດ ລວມທັງເປັນກົນໄກໃນການແກ້ໄຂບັນຫາຄວາມທຸກຍາກ ໂດຍມີບົດບາດຄຳຄັນຄື: (1) ກໍ່ໃຫ້ເກີດມີການສ້າງວຽກເຮັດງານທຳໃຫ້ປະຊາຊົນໃນທ້ອງຖິ່ນ; (2) ເປັນຈຸດກຳເນີດຂອງຜູ້ສົນໃຈການລົງທຶນຂອງຜູ້ປະກອບການລາຍໃໝ່ ເນື່ອງຈາກກິດຈະການໃນທຸລະກິດການຄ້າໃຊ້ເງິນທຶນບໍ່ສູງ ແລະ ມີຄວາມສ່ຽງນ້ອຍກວ່າການລົງທຶນໃນອຸດສາຫະກຳຂະໜາດໃຫຍ່; (3) ເປັນບ່ອນຝຶກອົບຮົມວິຊາຊີບຂອງແຮງງານປະເພດຕ່າງໆ ເຊິ່ງສາມາດຝຶກອົບຮົມຜົນການຮຽນຮູ້ຈາກປະສົບການການເຮັດວຽກຕົວຈິງ; (4) ກໍ່ໃຫ້ເກີດການເຊື່ອມໂຍງກັບກິດຈະການຂະໜາດໃຫຍ່ ຫຼື ກິດຈະການອື່ນໆທີ່ກ່ຽວຂ້ອງ; (5) ເພີ່ມມູນຄ່າໃຫ້ວັດຖຸດິບພາຍໃນປະເທດ ເພາະເປັນອຸດສາຫະກຳທີ່ຊັບພະຍາກອນມາຜະລິດສິນຄ້າເປັນຫຼັກ; (6) ເປັນການສ້າງລາຍໄດ້ໃຫ້ປະເທດຊາດ ໂດຍສະເພາະພາກການຜະລິດເພື່ອການສົ່ງອອກ ແລະ ພາກການທ່ອງທ່ຽວ; (7) ເປັນການປ້ອງກັນການຜູກຂາດໃນລະບົບເສດຖະກິດ ເນື່ອງຈາກທຸລະກິດການຄ້າຍ່ອມຊ່ວຍໃຫ້ເກີດການແຂ່ງຂັນ ໃນການດຳເນີນທຸລະກິດ ແລະ ການແຂ່ງຂັນທຸລະກິດທີ່ເປັນທຳ ເຊິ່ງຈະກໍ່ໃຫ້ເກີດປະສິດທິພາບຕໍ່ລະບົບເສດຖະກິດໂດຍລວມ. ໂດຍການປະກອບທຸລະກິດການຄ້າໃນ ເມືອງໄຊຍະບູລີ ແຂວງໄຊຍະບູລີ ທີ່ຂຶ້ນທະບຽນນຳພະແນກອຸດສາຫະກຳ ແລະ ການຄ້າ ມີຈຳນວນ ທັງໝົດ 160 ຫົວໜ່ວຍ (Deparment of industry and commerce of Xayabury Province, 2023).

ຈາກທີ່ມາ ແລະ ຄວາມສຳຄັນຂອງບັນຫາພົບວ່າຜູ້ປະກອບການທຸລະກິດການຄ້າ ໃນເມືອງໄຊຍະບູລີ ມີການພັດທະນາຂະຫຍາຍຕົວຂຶ້ນຢ່າງຕໍ່ເນື່ອງເພື່ອໃຫ້ເໝາະສົມກັບການປ່ຽນແປງສະພາບເສດຖະກິດໃນປັດຈຸບັນ ເຮັດໃຫ້ການດຳເນີນທຸລະກິດຕ້ອງປະເຊີນໜ້າກັບການແຂ່ງຂັນສູງຂຶ້ນ ແລະ ຜູ້ປະກອບການຕ້ອງຊອກຫາຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໂດຍການດຳເນີນທຸລະກິດການຄ້າພົບບັນຫາ ຄື: (1) ບັນຫາທາງດ້ານເສດຖະກິດຍັງບໍ່ໝັ້ນທ່ຽງ ແລະ ການຜະລິດສິນຄ້າຍັງບໍ່ຫຼາກຫຼາຍ ແລະ ຍັງບໍ່ເປັນທ່າແຮງໃນການສົ່ງອອກ; (2) ບັນຫາການວິເຄາະສະພາບແວດລ້ອມ ເພື່ອປັບປຸງການລົງທຶນ ແລະ ການດຳເນີນທຸລະກິດຍັງເຮັດບໍ່ທັນສອດຄ່ອງຕາມນະໂຍບາຍຂອງລັດຖະບານ; (3) ບັນຫາການປະຕິບັດມາດຕະການເພື່ອຊຸກຍູ້ຜູ້ປະກອບການພາຍໃນຍັງບໍ່ເປັນເຈົ້າການພັດທະນາຕົນເອງ ແລະ ຂາດປະສິດທິພາບໃນການແຂ່ງຂັນ; (4) ການທັນເປັນຄວາມທັນສະໄໝຂອງຜູ້ປະກອບການທຸລະກິດເພື່ອຕອບສະໜອງກັບຄວາມຕ້ອງການຂອງລູກຄ້າ. ສະນັ້ນ, ຜູ້ສຶກສາໃຫ້ຄວາມສຳຄັນ ແລະ ສົນໃຈທີ່ຈະສຶກສາການສ້າງຄວາມໄດ້ປຽບທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເພື່ອເປັນແນວທາງໃຫ້ການປະກອບທຸລະກິດປະສົບຜົນສຳເລັດ, ສາມາດພັດທະນາທຸລະກິດມີການຂະຫຍາຍຕົວ, ການບໍລິຫານການຕະຫຼາດ, ການພັດທະນາການບໍລິການທີ່ມີແນວຄິດສ້າງສັນ, ການພັດທະນາບຸກຄະລາກອນ ແລະ ສະພາບຄ່ອງໃນການບໍລິຫານທຸລະກິດເປັນທຸລະກິດທີ່ເຂັ້ມແຂງ, ຍົກລະດັບກິດຈະການຂອງຕົນເອງ ແລະ ເພີ່ມທ່າແຮງທຸລະກິດປະສົບຜົນສຳເລັດ.

ຈຸດປະສົງໃນຄົ້ນຄວ້າຄື: (1)ເພື່ອສຶກສາສະພາບການແຂ່ງຂັນທຸລະກິດການຄ້າຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ. (2) ເພື່ອສຶກສາການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ, (3) ເພື່ອສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.

## 2. ອຸປະກອນ ແລະ ວິທີການ

ໃນການຄົ້ນຄວ້າຄັ້ງນີ້ແມ່ນນຳໃຊ້ວິທີການຄົ້ນຄວ້າທາງປະລິມານປະລິມານ ຜູ້ຄົ້ນຄ້ວາໄດ້ນາໃຊ້ເຄື່ອງມືໃນການເກັບຂໍ້ມູນດ້ວຍແບບສອບຖາມ ຈາກຜູ້ປະກອບການທີ່ດຳເນີນທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຊະບູລີ ໂດຍປະກອບມີ ກຸ່ມຕົວຢ່າງ, ເຄື່ອງມືໃນການຄົ້ນຄວ້າ, ການເກັບລວມລວມຂໍ້ມູນ,

ແບບຈຳລອງທີ່ໃຊ້ໃນການສຶກສາ ແລະ ວິທີວິເຄາະຂໍ້ມູນ.

2.1 **ກຸ່ມຕົວຢ່າງ**

ກຸ່ມຕົວຢ່າງທີ່ຈະໃຊ້ເຂົ້າໃນການສຶກສາຄື ຜູ້ປະກອບການ ທີ່ທີ່ດຳເນີນທຸລະກິດ ຢູ່ດຳເນີນທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຊະບູລີ ຈຳນວນ 160 ຫົວໜ່ວຍ.

**2.2 ເຄື່ອງມືໃນການຄົ້ນຄວ້າ**

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ແມ່ນແບບສອບຖາມເຊິ່ງປະກອບມີ 4 ພາກສ່ວນຄື: ປັດໄຈດ້ານການແຂ່ງຂັນທຸລະກິດການຄ້າ; ປັດໄຈຄວາມສາມາດຂອງຜູ້ປະກອບການ, ປັດໄຈສະພາບແວດລ້ອມພາຍນອກຂອງທຸລະກິດ ແລະ ການຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.

ການສ້າງເຄື່ອງມືໃນການຄົ້ນຄວ້າໄດ້ອີງໃສ່ແນວຄິດການການແຂ່ງຂັນໃນອຸດສາຫະກຳ ຂອງ Porter & Milar (1985), ການວິເຄາະປັດໄຈລັກສະນະຂອງການເປັນຜູ້ປະກອບການ ຂອງ Dess, Lumpkin & Taylor (2005); ການວິເຄາະປັດໄຈສະພາບແວດລ້ອມພາຍນອກຂອງ Gupta, A. (2013) ແລະ ຍຸດທະສາດການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນ ຂອງ Porter (1990) ແລະ Porter (2005). ຂໍ້ມູນສ່ວນທີ່ເປັນບົດຄົ້ນຄວ້າທີ່ກ່ຽວຂ້ອງໄດ້ແກ່: Khunthong (2017), Anoree (2021), Singvilay (2021), Angsuratkomol (2016), Nakkasem &Pasunon (2018), Sopaponerungshi (2019), Thysavang et al. (2023) ເພື່ອເປັນແນວທາງໃນການສ້າງເຄື່ອງມື.

**2.3 ການເກັບກຳລວບລວມຂໍ້ມູນ**

ຜູ້ຄົ້ນຄວ້າໄດ້ລົງເກັບກຳຂໍ້ມູນດ້ວຍຕົນເອງ ໂດຍແຈກຢາຍແບບສອບຖາມໃຫ້ຜູ້ປະກອບການທີ່ດຳເນີນທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຊະບູລີ ຈຳນວນ 160 ຄົນ ເຊິ່ງຜູ້ປະກອບການໄດ້ຕອບແບບສອບຖາມຕາມຄວາມເປັນຈິງ. ຫຼັງຈາກຜູ້ປະກອບການທີ່ດຳເນີນທຸລະກິດການຄ້າ ຕອບແລ້ວເກັບລວມຂໍ້ມູນຢ່າງເປັນລະບົບລວມທັງກວດກາຄວາມຖືກຕ້ອງແລະຄົບຖ້ວນແລ້ວມາປ້ອນຂໍ້ມູນເຂົ້າໂປແກຣມ SPSS ເພື່ອດຳເນີນການວິເຄາະແລະແປຜົນການຄົ້ນຄວ້າ.

**2.4 ແບບຈຳລອງທາງເສດຖາມິຕິ**

$$Y(X) = \beta_0 + \beta_1 X_1 + \beta_2 X_2 + \beta_3 X_3 + \beta_4 X_4 + \beta_5 X_5 + \beta_6 X_6 + \beta_7 X_7 + \beta_8 X_8 + \beta_9 X_9$$
$$+ \beta_{10} X_{10} + \beta_{11} X_{11} + \beta_{12} X_{12} + \beta_{13} X_{13} + \beta_{14} X_{14} + \beta_{15} X_{15} + \beta_{16} X_{16} + \varepsilon$$

ໂດຍ: $Y$ ຄືການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ, ສ່ວນ $X_1$, $X_2$, $X_3$, $X_4$, $X_5$, $X_6$, $X_7$, $X_8$, $X_9$, $X_{10}$, $X_{11}$, $X_{12}$, $X_{13}$ ແລະ $X_{14}$ ຄືປັດໄຈຄວາມເປັນອິດສະຫຼະໃນການບໍລິຫານງານ, ປັດໄຈດ້ານຄວາມມີນະວັດຕະກຳ, ປັດໄຈດ້ານຄວາມກ້າສ່ຽງ, ປັດໄຈດ້ານຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈດ້ານຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄູ່ແຂ່ງຂັນປະຈຸບັນ, ປັດໄຈອຳນາດຕໍ່ລອງຈາກຜູ້ສະໜອງ, ປັດໄຈອຳນາດຕໍ່ລອງຈາກລູກຄ້າ, ປັດໄຈໄພຄຸກຄາມຈາກຄູ່ແຂ່ງຂັນລາຍໃໝ່, ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ, ປັດໄຈດ້ານການເມືອງ ແລະ ກົດໝາຍ, ປັດໄຈດ້ານເສດຖະກິດ, ປັດໄຈດ້ານວັດທະນາທຳສັງຄົມ ແລະ ປັດໄຈດ້ານເຕັກໂນໂລຊີ ຕາມລຳດັບ ໂດຍ $\beta_0$ ຄືຄ່າຄົງທີ່ຂອງສົມຜົນການຖົດຖອຍ, $\beta_1$, $\beta_2$, …, $\beta_{16}$ ຄືຄ່າສຳປະສິດຂອງສົມຜົນການຖົດຖອຍຂອງຕົວປ່ຽນອິດສະຫຼະ $X_1, X_2, \ldots, X_{16}$ ແລະ $\varepsilon$ ຄືຄວາມຄາດເຄື່ອນໃນການປະເມີນຄ່າ ($\varepsilon = Y - \bar{Y} = 0$).

**2.5 ວິທີການວິເຄາະຂໍ້ມູນ**

**ສ່ວນທີ 1**: ການວິເຄາະລະດັບປັດໄຈການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 2:** ການວິເຄາະລະດັບປັດໄຈພາຍໃນຂອງທຸລະກິດ ໃນການສ້າງຄວາມໄດ້ປຽບທາງດ້ານການ

ແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 3:** ການວິເຄາະປັດໄຈພາຍນອກຂອງທຸລະກິດ ໃນການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 4:** ການວິເຄາະການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເປັນການວິເຄາະແບບປະລິມານດ້ວຍສະຖິຕິພັນລະນາ ປະກອບດ້ວຍຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ.

**ສ່ວນທີ 5**: ການວິເຄາະປັດໄຈທີ່ສົ່ງຜົນຕໍ່ການການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ເປັນການວິເຄາະແບບປະລິມານ ໃນແບບຈໍາລອງສົມຜົນການຖົດຖອຍແບບພະຫຸພົດ ດ້ວຍວິທີ Stepwise ເຊິ່ງມີການກວດສອບສໍາປະສິດສະຫະສໍາພັນແບບເພຍຊັນ (Pearson correlation), ສໍາປະສິດໃນການຕັດສິນໃຈ ( $R^2$ ) ແລະ T-test.

## 3. ຜົນໄດ້ຮັບ

### 3.1 ສະພາບການແຂ່ງຂັນໃນການປະກອບທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕາມການແຂ່ງຂັນໃນອຸດສາຫະກໍາ

ຈາກຜົນການວິເຄາະພົບວ່າຜູ້ປະກອບການທີ່ດໍາເນີນທຸລະກິດການຄ້າ ຢູ່ພາຍໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ທີ່ຕອບແບບສອບຖາມ ຈໍານວນ 160 ຄົນ ໂດຍລວມແຮງກົດດັນຈາກປັດໄຈທາງການແຂ່ງຂັນ ຢູ່ໃນລະດັບປານກາງ ດ້ວຍຄ່າສະເລ່ຍເທົ່າກັບ 3.37 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.40 ເຊິ່ງມາຈາກແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ ໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມືອປຽບທຽບກັບຄູ່ແຂ່ງຂັນ; ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕໍ່າຈົນເຮັດໃຫ້ຄູ່ແຂ່ງຂັນລາຍໃໝ່ບໍ່ສາມາດເຮັດໄດ້; ແຮງກົດດັນຈາກອໍານາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ ໃນດ້ານແຮງກົດດັນຈາກແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; ແຮງກົດດັນຈາກອໍານາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນຈາກລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕໍ່າກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ ແລະ ແຮງກົດດັນຈາກອານາດຕໍ່ລອງສິນຄ້າທົດແທນ ໃນດ້ານແຮງກົດດັນຈາກການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ.

ຜູ້ປະກອບການທີ່ດໍາເນີນທຸລະກິດການຄ້າ ຢູ່ພາຍໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕອບແບບສອບຖາມ ຈໍານວນ 160 ຄົນ ໂດຍລວມໃຫ້ຄວາມສໍາຄັນ ປັດໄຈລັກສະນະການເປັນຜູ້ປະກອບການເພື່ອການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ເມືອງໄຊຍະບູລີ ແຂວງໄຊຍະບູລີ ຢູ່ໃນລະດັບປານກາງ ດ້ວຍຄ່າສະເລ່ຍເທົ່າກັບ 3.40 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.35 ເຊິ່ງມາຈາກດ້ານການມີອິດສະຫຼະໃນການບໍລິຫານງານໃນດ້ານການສະໜັບສະໜູນໃຫ້ບຸກຄະລາກອນ ຫຼື ທີມງານມີອິດສະຫຼະໃນການປະຕິບັດວຽກງານຢ່າງເຕັມທີ; ປັດໄຈຄວາມຫ້າວຫັນໃນການປະຕິບັດງານ ໃນດ້ານຄວາມພະຍາຍາມທີ່ຈະສະແຫວ່ງຫາໂອກາດໃໝ່ເຊັ່ນ: ການສະແຫ່ງຫາສິນຄ້າໃໝ່, ການສະແຫ່ງຫາກຸ່ມຕະຫຼາດໃໝ່ໆ; ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ ໃນດ້ານການປັບຕົວທຸລະກິດການຄ້າຕາມສະພາບແວດລ້ອມ ແລະ ເສດຖະກິດສູງກວ່າຄູ່ແຂ່ງຂັນເພື່ອໃຫ້ມີຄວາມສາມາດໃນການແຂ່ງຂັນ; ປັດໄຈຄວາມກ້າສ່ຽງໃນດ້ານການກ້າສ່ຽງໃນໃຊ້ຊັບສິນ ຫຼື ເງິນຈໍານວນຫຼວງຫຼາຍສໍາລັບການປະກອບທຸລະກິດການຄ້າ ແລະ ການລົງທຶນ ແລະ ປັດໄຈຄວາມມີນະວັດຕະກໍາ ໃນດ້ານໃນດ້ານຄວາມພະຍາຍາມທີ່ຈະສະແຫວ່ງຫາການນໍາໃຊ້ເຕັກໂນໂລຊີ, ຄວາມຄິດໃໝ່ ແລະ ສິ່ງແປກໃໝ່ ທີ່ນໍາໄປສູ່ການພັດທະນາສິນຄ້າ ແລະ ການຄ້າຕາມລໍາດັບ.

ຜູ້ປະກອບການທີ່ດໍາເນີນທຸລະກິດການຄ້າ ຢູ່ພາຍໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕອບແບບ

ສອບຖາມ ຈຳນວນ 160 ຄົນ ໂດຍລວມໃຫ້ຄວາມສຳຄັນ ປັດໄຈສະພາບແວດລ້ອມພາຍນອກເພື່ອໃຊ້ເປັນໂອກາດການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດການຄ້າ ເມືອງໄຊຍະບູລີ ແຂວງໄຊຍະບູລີ ຢູ່ໃນລະດັບປານກາງ ດ້ວຍຄ່າສະເລ່ຍເທົ່າກັບ 3.33 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.32 ມາຈາກປັດໄຈດ້ານວັດທະນາທຳ ແລະ ສັງຄົມ ໃນດ້ານຄ່ານິຍົມຂອງສັງຄົມ ແລະ ລູກຄ້າໃນການອຸປະໂພກ-ບໍລິໂພກສິນຄ້າ; ປັດໄຈດ້ານເຕັກໂນໂລຊີ ໃນດ້ານການກະຈາຍຂໍ້ມູນຂ່າວສານໄປເຖິງກຸ່ມລູກຄ້າເປົ້າໝາຍ ແລະ ທົ່ວປະເທດໄດ້ວ່ອງໄວ; ປັດໄຈດ້ານເສດຖະກິດ ໃນດ້ານຄວາມເໝາະສົມຕົ້ນທຶນຂອງສິນຄ້າ/ວັດຖຸດິບ ແລະ ປັດໄຈດ້ານການເມືອງ-ກົດ ໝາຍ ໃນດ້ານການເບິ່ງເຫັນໂອກາດຈາກສະຖຽນລະພາບທາງການການເມືອງໃນການດຳເນີນທຸລະກິດການຄ້າ.

## 3.2 ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ

ຈາກຜົນການວິເຄາະ ພົບວ່າຜູ້ປະກອບການທີ່ດຳເນີນທຸລະກິດການຄ້າ ຢູ່ພາຍໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ທີ່ຕອບແບບສອບຖາມ ຈຳນວນ 160 ຄົນ ໂດຍລວມໃຫ້ຄວາມສຳຄັນການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຢູ່ໃນລະດັບຫຼາຍ ດ້ວຍຄ່າສະເລ່ຍເທົ່າກັບ 3.46 ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ 0.36 ເຊິ່ງມາຈາກການສ້າງຄວາມແຕກຕ່າງໃນດ້ານທຸລະກິດນຳແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມທັບໃຈໃຫ້ແກ່ລູກຄ້າ; ດ້ານຕອບສະໜອງຢ່າງວ່ອງໄວ ໃນດ້ານຄວາມສາມາດນຳສະເໜີສິນຄ້າໃໝ່ໆ ແລະ ການຕອບສະໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວ; ການມຸ່ງເນັ້ນຕະຫຼາດສະເພາະໃນດ້ານກິດຈະການໃຫ້ຄວາມສຳພັນທີ່ດີ ແລະ ໃກ້ສິດກັບລູກຄ້າເພື່ອໃຫ້ຕອບສະໜອງຂອງລູກຄ້າທີ່ປ່ຽນແປງໄດ້ທັນທີ; ການເປັນຜູ້ນຳທາງຕົ້ນທຶນໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດຳເນີນງານ ໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ.

## 3.3 ປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການໃນເມືອງໄຊຍະບູລີ ແຂວງໄຊຍະບູລີ

ຈາກການຄົ້ນຄວ້າ ພົບວ່າປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ໃນລະດັບຄວາມສຳຄັນທາງສະຖິຕິ 0.01 ປະກອບ 6 ປັດໄຈຄື: ປັດໄຈຄວາມຫ້າວຫັນໃນການປະຕິບັດງານ , ປັດໄຈຄູ່ແຂ່ງຂັນປະຈຸບັນ, ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈຄວາມກ້າສ່ຽງ, ປັດໄຈດ້ານການເມືອງ-ກົດໝາຍ ແລະ ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ ໂດຍມີການຄວາມສຳພັນທາງດຽວກັນໃນທາງດຽວກັນ ຍົກເວັ້ນປັດໄຈດ້ານການເມືອ-ກົດໝາຍ ມີຄວາມສຳພັນທາງກົງກັນຂ້າມຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ເມືອງໄຊຍະບູລີ ແຂວງໄຊຍະບູລີ. ສ່ວນປັດໄຈການມີອິດສະຫຼະໃນການບໍລິການງານ, ປັດໄຈຄວາມມີນະວັດຕະກຳ, ປັດໄຈອຳນາດຕໍ່ລອງຈາກຜູ້ສະໜອງ, ປັດໄຈອຳນາດຕໍ່ລອງຈາກລູກຄ້າ, ປັດໄຈໄພຄຸກຄາມຈາກຄູ່ແຂ່ງຂັນລາຍໃໝ່, ປັດໄຈເສດຖະກິດ, ປັດໄຈວັດທະນະທຳສັງຄົມ, ປັດໄຈເຕັກໂນໂລຊ ບໍ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ໃນລະດັບຄວາມສຳຄັນທາງສະຖິຕິ 0.05.

# 4. ວິພາກຜົນ

1) ຈາກການຄົ້ນຄວ້າສະພາບການແຂ່ງຂັນໃນການປະກອບທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕາມທິດສະດີການແຂ່ງຂັນໃນອຸດສຫະກຳ ພົບວ່າແຮງກົດດັນຈາກສະພາບການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຢູ່ໃນລະດັບປານກາງ. ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Khunthong (2017) ທີ່ສຶກສາການ

ຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດເຮືອນພັກໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ໃນທຸກດ້ານຂອງແຮງກົດດັນ 5 ປະການຂອງ Porter & Milar (1985) ແຕ່ລະດັບແຮງກົດດັນຈາກການແຂ່ງຂັນທຸລະກິດເຮືອນພັກໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ຢູ່ໃນລະດັບສູງ. ສອດຄ່ອງກັບການຄົ້ນຄວ້າຂອງ Sopaponerungshi (2019) ທີ່ໄດ້ສຶກສາປັດໄຈການຂັບເຄື່ອນການແຂ່ງຂັນທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສຳເລັດທາງທຸລະກິດຂອງອຸດສາຫະກຳການສົ່ງອອກເຄື່ອງປະດັບຂອງໄທໃນທຸກດ້ານຂອງແຮງກົດດັນ 5 ປະການຂອງ Porter & Milar (1985) ແຕ່ລະດັບແຮງກົດດັນຈາກການແຂ່ງຂັນທຸລະກິດຂອງອຸດສາຫະກຳການສົ່ງອອກເຄື່ອງປະດັບຂອງໄທ ຢູ່ໃນລະດັບສູງ. ສອດຄ່ອງກັບການຄົ້ນຄວ້າຂອງ Angsuratkomol (2016) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດ ມັນຕົ້ນ: ກໍລະນີສຶກສາຜູ້ປະກອບການທຸລະກິດມັນຕົ້ນ ແຂວງອຸບົນລາດຊະທານີ ໃນທຸກດ້ານຂອງແຮງກົດດັນ 5 ປະການຂອງ Porter & Milar (1985). ສະນັ້ນ, ຄວນກຳນົດຍຸດທະສາດໃນການແຂ່ງຂັນທາງທຸລະກິດ ເພື່ອສ້າງໃຫ້ທຸລະກິດມີຄວາມໄດ້ປຽບທາງດ້ານການແຂ່ງຂັນທຸລະກິດ ໃນອານາຄົດ ໂດຍນຳແຮງກົດດັນ 5 ປະການຂອງ Porter & Milar (1985) ໄດ້ປັບປຸງທຸລະກິດໃຫ້ມີອຳນາດຕໍ່ລອງທາງທຸລະກິດສູງ ໂດຍສະເພາະແຮງກົດດັນຈາກ: (1) ຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນໃນດ້ານແຮງກົດດັນຄວາມສາມາດໃນການບໍລິຫານທຸລະກິດການຄ້າໃຫ້ຕົ້ນທຶນຕໍ່ໜ່ວຍຄຸ້ມຄ່າທີ່ສຸດເມືອປຽບທຽບກັບຄູ່ແຂ່ງຂັນ; (2) ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ ໃນດ້ານແຮງກົດດັນຕົ້ນທຶນສິນຄ້າ ແລະ ຕົ້ນທຶນໃນການບໍລິຫານທຸລະກິດຕໍ່າຈົນເຮັດໃຫ້ຄູ່ແຂ່ງຂັນລາຍໃໝ່ບໍ່ສາມາດເຮັດໄດ້; (3) ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບໃນດ້ານແຮງກົດດັນຈາກແຫຼ່ງສິນຄ້າ/ວັດຖຸດິບທີ່ມີຄຸນນະພາບສາມາດຕອບສະໜອງກັບທຸລະກິດ; (4) ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ ໃນດ້ານແຮງກົດດັນຈາກລູກຄ້າມີຄ່າໃຊ້ຈ່າຍໃນການຊື້ສິນຄ້າຕໍ່າກວ່າຜູ້ຂາຍສິນຄ້າລາຍອື່ນໃນທຸລະກິດດຽວກັນ ແລະ (5) ແຮງກົດດັນຈາກອຳນາດຕໍ່ລອງສິນຄ້າທົດແທນໃນດ້ານແຮງກົດດັນຈາກການປັບປຸງຄຸນນະພາບສິນຄ້າຂອງທຸລະກິດທ່ານສູງກວ່າສິນຄ້າທົດແທນກັນໄດ້ໃນຕະຫຼາດ.

2) ຈາກການຄົ້ນຄວ້າການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ພົບວ່າການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຢູ່ໃນລະດັບຫຼາຍ. ເຊິ່ງການຄົ້ນຄວ້າສອດຄ່ອງກັບ Khunthong (2017) ທີ່ໄດ້ສຶກສາການຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດເຮືອນພັກ ໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ໃນດ້ານຍຸດທະສາດການຕອບສະໜອງຢ່າງວ່ອງໄວ, ຍຸດທະສາດການສ້າງຄວາມແຕກຕ່າງຂອງທຸລະກິດເຮືອນພັດ ແລະ ຍຸດທະສາດການເປັນຜູ້ນຳທາງຕົ້ນທຶນ. ການຄົ້ນຄວ້າຍັງສອດຄ່ອງກັບ Singvilay (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃນດ້ານດ້ານຄວາມແຕກຕ່າງໃນບໍລິການ; ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານຕົ້ນທຶນຕໍ່າຕາມລຳດັບ. ການຄົ້ນຄວ້າສອດຄ່ອງກັບ Anoree (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສຳເລັດຂອງຜູ້ປະກອບການ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນແຂວງຣາຊະບຸຣີ(ໄທ) ໃນທຸກດ້ານຄື ດ້ານການເປັນຜູ້ນຳທາງຕົ້ນທຶນ, ການສ້າງຄວາມແຕກຕ່າງ, ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານການມອງຕະຫຼາດສະເພາະ. ການຄົ້ນຄວ່າສອດຄ່ອງກັບ Nakkasem & Pasunon (2018) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນເຂດກຸງເທບມະຫານະຄອນ(ໄທ) ໃນດ້ານດ້ານຄວາມແຕກຕ່າງໃນບໍລິການ; ດ້ານຕອບສະໜອງຢ່າງວ່ອງໄວ ແລະ ດ້ານຕົ້ນທຶນຕໍ່າ. ການຄົ້ນຄວ່າສອດຄ່ອງກັບ Angsuratkomol (2016) ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດ ມັນຕົ້ນ: ກໍລະນີສຶກສາຜູ້ປະກອບການທຸລະກິດມັນຕົ້ນ ແຂວງອຸບົນລາດຊະທານີ ໃນຄວາມໄດ້ປຽບທາງດ້ານຕົ້ນທຶນ; ດ້ານການຕອບສະໜອງຢ່າງວ່ອງໄວ.

ສະນັ້ນ, ຜູ້ປະກອບການທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕ້ອງໃຊ້ຍຸດທະສາດໃນການດຳເນີນທຸລະກິດ ຄື (1) ສ້າງຄວາມແຕກຕ່າງໃນດ້ານທຸລະກິດນຳແບບສິນຄ້າໃໝ່ໆທີ່ແຕກຕ່າງຈາກຄູ່ແຂ່ງຂັນອອກສູ່ຕະຫຼາດ ແລະ ສ້າງຄວາມທັບໃຈໃຫ້ແກ່ລູກຄ້າ; (2) ຕ້ອງການຕອບສະໜອງຢ່າງວ່ອງໄວໃຫ້ກັບລູກຄ້າ ໃນດ້ານຄວາມສາມາດນຳສະເໜີສິນຄ້າໃໝ່ໆ ທີ່ສາມາດການຕອບສະໜອງກັບຄວາມຕ້ອງການລູກຄ້າຢ່າງວ່ອງໄວ; (3) ຕ້ອງມຸ່ງເນັ້ນຕະຫຼາດສະເພາະໃນດ້ານກິດຈະການໃຫ້ຄວາມສຳພັນທີ່ດີ ແລະ ໃກ້ສິດກັບລູກຄ້າເພື່ອໃຫ້ຕອບສະໜອງຂອງລູກຄ້າທີ່ປ່ຽນແປງໄດ້ທັນທີ; (4) ຕ້ອງສ້າງໃຫ້ທຸລະກິດການເປັນຜູ້ນຳທາງຕົ້ນທຶນ ໃນດ້ານຄວາມສາມາດໃນການຫຼຸດຕົ້ນທຶນໃນການດຳເນີນງານ ໂດຍໃຊ້ຊັບພະຍາກອນທີ່ມີຢູ່ຢ່າງມີປະສິດທິພາບ.

3) ຈາກການຄົ້ນຄວ້າປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ປະກອບ 6 ປັດໄຈ ຄື: ປັດໄຈຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄູ່ແຂ່ງຂັນປະຈຸບັນ, ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈຄວາມກ້າສ່ຽງ, ປັດໄຈດ້ານການເມືອງ-ກົດໝາຍ ແລະ ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ. ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Anoree (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມໄດ້ປຽບທາງດ້ານການແຂ່ງຂັນ ແລະ ຄວາມສຳເລັດຂອງຜູ້ປະກອບການ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ໃນແຂວງຣາຊະບຸຣີ (ໄທ) ໃນປັດໄຈຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄວາມກ້າສ່ຽງ ແລະ ປັດໄຈດ້ານການເມືອງ-ກົດໝາຍ. ການຄົ້ນຄວ້າສອດຄ່ອງກັບ Nakkasem &Pasunon (2018) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດບໍລິການໃນເຂດກຸງເທບມະຫານະຄອນ (ໄທ) ໃນດ້ານຄວາມກ້າສ່ຽງຂອງຜູ້ປະກອບການ. ການຄົ້ນຄວ້າສອດຄ່ອງກັບ Thysavang et al. (2023) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນຂອງຜູ້ປະກອບການທຸລະກິດຫັດຖະກຳ ໃນນະຄອນຫຼວງພະບາງ ໃນປັດໄຈຄວາມຫ້າວຫັນໃນການປະຕິບັດງານ ແລະ ປັດດ້ານຄວາມກ້າສ່ຽງຂອງຜູ້ປະກອບການ. ການຄົ້ນຄວ້າສອດຄ່ອງກັບ Angsuratkomol (2016) ທີ່ໄດ້ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຂອງຜູ້ປະກອບການທຸລະກິດ ມັນຕົ້ນ: ກໍລະນີສຶກສາຜູ້ປະກອບການທຸລະກິດມັນຕົ້ນແຂວງອຸບົນລາດຊະທານີ ໃນປັດໄຈໄພຄຸກຄາມຈາກສິນຄ້າທົດແທນ. ການຄົ້ນຄວ້າຍັງສອດຄ່ອງກັບ Singvilay (2021) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບການແຂ່ງຂັນຂອງຜູ້ປະກອບກິດຈະການທຸລະກິດບໍລິການໃນເຂດເທດສະບານເມືອງໄຊ ແຂວງອຸດົມໄຊ ໃນປັດໄຈດ້ານການເມືອງ-ກົດໝາຍມີຢູ່ໃນທິດທາງກົງກັນຂ້າມ. ການຄົ້ນຄວ້າແຕກຕ່າງຈາກ Khunthong (2017) ໄດ້ສຶກສາການສ້າງຄວາມໄດ້ປຽບໃນການແຂ່ງຂັນຂອງທຸລະກິດເຮືອນພັກ ໃນເທດສະບານເມືອງຊຽງໃໝ່ ແຂວງຊຽງໃໝ່ ໃນທຸກດ້ານ. ສະນັ້ນ, ຜູ້ປະກອບການທຸລະກິດການຄ້າໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕ້ອງການສ້າງຄວາມໄດ້ປຽບທາງດ້ານການແຂ່ງຂັນຕ້ອງໃຫ້ຄວາມສຳຄັນປັດໄຈຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄູ່ແຂ່ງຂັນປະຈຸບັນ, ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈຄວາມກ້າສ່ຽງ, ປັດໄຈດ້ານການເມືອງ-ກົດໝາຍ ແລະ ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ.

## 5. ສະຫຼຸບ

ສະພາບການແຂ່ງຂັນໃນການປະກອບທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຕາມທິດສະດີການແຂ່ງຂັນໃນອຸດສາຫະກຳ ພົບວ່າແຮງກົດດັນຈາກປັດໄຈທາງການແຂ່ງຂັນທຸລະກິດການຄ້າ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຢູ່ໃນລະດັບປານກາງ.

ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ຢູ່ໃນລະດັບຫຼາຍ ໂດຍປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ ປະກອບ 6 ປັດໄຈຄື: ປັດໄຈຄວາມຫ້າວຫັນໃນການປະຕິບັດງານ, ປັດໄຈຄູ່ແຂ່ງຂັນປະຈຸບັນ, ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ, ປັດໄຈ

ຄວາມກ້າສ່ຽງ, ປັດໄຈດ້ານການເມືອງ-ກົດໝາຍ ແລະ ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດຂໍປະຕິຍານຕົນວ່າຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດແລະບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Angsuratkomol, T. (2016). *Factors that affect the creation of competitive advantage of enterprises yard cassava Thailand. Case Study entrepreneur yard. Ubon Ratchathani*. [Online] 2023. Available from: http://dspace.bu.ac.th/handle/123456789/2221.

Anoree, S. (2021). *Factors affecting competitive advantage and success of entrepreneurs and small and medium* enterprises in Ratchaburi province. [Online] 2023. Available from: https://sure.su.ac.th/xmlui/handle/123456789/26608

Bank *of the* Lao PDR Northern Province *of* Luang Prabang. *(2022). Annual Report 2022 on* Bank *of the* Lao PDR Northern Province *of* Luang Prabang. [Online] 2023. Available from: https://www.bol.gov.la//luangprabang/annualreports

Dess, G.G., Lumpkin, G.T, & Taylor, M.L. (2005). *Strategic management: creating competitive advantage* (2nd ed.). New York: McGraw-Hill.

Department of industry and commerce of Xayabury Province. (2023). *Summary of commercial enterprises of Xayabury district. No.74.*

Gupta, A. (2013). Environment & PEST analysis: An approach to external business environment. *International Journal of Modern Social Sciences, 2,* 34-43.

Khunthong, P. (2017). *Building competitive advantage for guest house business in Muang district, Chiang Mai. Master thesis of business administration in business Administration. Mawjo University*. [Online] 2023. Available from: http://ir.mju.ac.th/dspace/bitstream/123456789/102/1/5806401013.pdf.

Ministry of industry and commerce of Lao PDR (2022). *Laws with the promotion of micro-enterprises, small and medium-sized enterprises.* [Online] 2023. Available from: https://msmepa.org/

Navikarn, S. (2002). *Strategic Management. Bangkok:* Thammasat University Press.

Nakkasem.W & Pasunon. P. (2018). *Factors Affecting the Competitive Advantage of Service Business Entrepreneurs in Bangkok.* [Online] 2023. Available from: https://he02.tci-thaijo.org/index.php/Veridian-E-Journal/article/view/120933/93421.

Porter, M.E & Milar, V.E. (1985). *How Information gives you competitive advantage.* Harvard Business Review: P149-160.

Porter, M.E. (1990). *The competitive advantage of nations. New York*: Free Press.

Porter, M.E. (2005). *The competitive advantage creating and sustaining superior Performance*. New York: The Free Press.4.

Sopaponerungshi, M. (2019). *Competitive driving factors affected of competitive advantage and business Success of gems and jewelry export industries in Thailand.* [Online] 2023. Available

from: http://dspace.bu.ac.th/bitstream/123456789/3988/1/mathee_sopa.pdf.

Singvilay, L. (2021). *Factors affecting the competitive advantage of Service Business entrepreneurs in the Xay district municipality of Oudomxay province.* [Master thesis], Souphanouvong University.

Thysavang, B., Hoongsengpha. S & Sengchan, S. (2023). Factors affecting for competitive advantage of handicraft business in Luang Prabang city. *Souphanouvong university journal of multidisciplinary research and development 9*(3), 206-213

ຕາຕະລາງ 1: ສະແດງເຖິງຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນປັດໄຈດ້ານສການແຂ່ງຂັນໃນການປະກອບທຸລະກິດການຄ້າຂອງຜູ້ປະກອບການ ເມືອງໄຊຍະບູລີ ແຂວງໄຊຍະບູລີ.

| ລ/ດ | ສະພາບການແຂ່ງຂັນໃນການປະກອບທຸລະກິດການຄ້າ | n | $\bar{X}$ | S.D | ລະດັບການແຂ່ງຂັນ |
|---|---|---|---|---|---|
| 1 | ແຮງກົດດັນຂອງຄູ່ແຂ່ງຂັນທຸລະກິດການຄ້າໃນປະຈຸບັນ | 160 | 3.63 | 0.57 | ສູງ |
| 2 | ແຮງກົດດັນການເຂົ້າມາຂອງຄູ່ແຂ່ງຂັນລາຍໃໝ່ | 160 | 3.37 | 0.49 | ປານກາງ |
| 3 | ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ສົ່ງສິນຄ້າ/ວັດຖຸດິບ | 160 | 3.28 | 0.50 | ປານກາງ |
| 4 | ແຮງກົດດັນຈາກອຳນາດຕໍ່ລອງຂອງຜູ້ຊື້ | 160 | 3.28 | 0.46 | ປານກາງ |
| 5 | ແຮງກົດດັນຈາກອກນາດຕໍ່ລອງສິນຄ້າທົດແທນ | 160 | 3.25 | 0.50 | ປານກາງ |
| | ລວມ | 160 | 3.37 | 0.40 | ປານກາງ |

ຕາຕະລາງ 2: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສາຄັນ ປັດໄຈລັກສະນະການເປັນຜູ້ປະກອບການ ຂອງຜູ້ປະກອບການໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.

| ລ/ດ | **ປັດໄຈລັກສະນະການເປັນຜູ້ປະກອບການ** | n | $\bar{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ປັດໄຈການມີອິດສະຫຼະໃນການບໍລິຫານງານ | 160 | 3.51 | 0.50 | ຫຼາຍ |
| 2 | ປັດໄຈຄວາມຫ້າວຫັນໃນການປະຕິບັດງານ | 160 | 3.43 | 0.55 | ຫຼາຍ |
| 3 | ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ | 160 | 3.40 | 0.47 | ປານກາງ |
| 4 | ປັດໄຈຄວາມກ້າສ່ຽງ | 160 | 3.33 | 0.47 | ປານກາງ |
| 5 | ປັດໄຈຄວາມມີນະວັດຕະກຳ | 160 | 3.32 | 0.44 | ປານກາງ |
| | ລວມ | 160 | 3.40 | 0.35 | ປານກາງ |

ຕາຕະລາງ 3: ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນ ປັດໄຈສະພາບແວດລ້ອມພາຍນອກ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.

| ລ/ດ | ປັດໄຈສະພາບແວດລ້ອມພາຍນອກ | n | $\bar{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ປັດໄຈດ້ານວັດທະນາທຳ ແລະ ສັງຄົມ | 160 | 3.37 | 0.46 | ປານກາງ |
| 2 | ປັດໄຈດ້ານເສດຖະກິດ | 160 | 3.34 | 0.44 | ປານກາງ |
| 3 | ປັດໄຈດ້ານການເມືອງ | 160 | 3.31 | 0.52 | ປານກາງ |
| 4 | ປັດໄຈດ້ານເຕັກໂນໂລຊີ | 160 | 3.31 | 0.51 | ປານກາງ |
| | ລວມ | 160 | 3.33 | 0.32 | ປານກາງ |

ຕາຕະລາງ 5 ສະແດງເຖິງ ຈຳນວນ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ ແລະ ລະດັບຄວາມສຳຄັນດ້ານການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດຂອງຜູ້ປະກອບການໃນເມືອງໄຊຍະບູລີ ແຂວງໄຊຍະບູລີ.

| ລ/ດ | ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ | n | $\bar{X}$ | S.D | ລະດັບຄວາມສຳຄັນ |
|---|---|---|---|---|---|
| 1 | ການສ້າງຄວາມແຕກຕ່າງ | 160 | 3.50 | 0.49 | ຫຼາຍ |
| 2 | ດ້ານຕອບສະໜອງຢ່າງວ່ອງໄວ | 160 | 3.45 | 0.45 | ຫຼາຍ |
| 3 | ການມຸ່ງເນັ້ນຕະຫຼາດສະເພາະ | 160 | 3.44 | 0.50 | ຫຼາຍ |
| 4 | ການເປັນຜູ້ນຳທາງຕົ້ນທຶນ | 160 | 3.43 | 0.47 | ຫຼາຍ |
| | ລວມ | 160 | 3.46 | 0.36 | ຫຼາຍ |

ຕາຕະລາງ 5 ການປະເມີນປັດໄຈທີ່ສົ່ງຜົນຕໍ່ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າ ຂອງຜູ້ປະກອບການ ໃນເມືອງໄຊຍະບູລີ ແຂວງໄຊຍະບູລີ

**Coefficients[a]** (ຄ່າສຳປະສິດຂອງສົມຜົນພະຍາກອນ)

| Model | | B | Std. Error | Beta | t | Sig. |
|---|---|---|---|---|---|---|
| 6 | (Constant) | 1.044 | 0.190 | | 5.498 | 0.000 |
| | $X_5$: ປັດໄຈຄວາມຫ້າວຫັນໃນການປະຕິບັດງານ | 0.206 | 0.037 | 0.320 | 5.630 | 0.000 |
| | $X_6$: ປັດໄຈຄູ່ແຂ່ງຂັນປະຈຸບັນ | 0.176 | 0.038 | 0.283 | 4.693 | 0.000 |
| | $X_4$: ປັດໄຈຄວາມເຂັ້ມແຂງໃນການແຂ່ງຂັນ | 0.160 | 0.046 | 0.210 | 3.481 | 0.001 |
| | $X_3$: ປັດໄຈຄວາມກ້າສ່ຽງ | 0.166 | 0.045 | 0.221 | 3.697 | 0.000 |
| | $X_{11}$: ປັດໄຈການເມືອງ ແລະ ກົດໝາຍ | -0.116 | 0.039 | -0.170 | -2.988 | 0.003 |
| | $X_{10}$: ປັດໄຈໄພຄຸກຄາມຈາກສິນຄ້າທົດແທນ | 0.109 | 0.043 | 0.151 | 2.541 | 0.012 |

Dependent Variable: Y(ການສ້າງຄວາມໄດ້ປຽບທາງການແຂ່ງຂັນທຸລະກິດການຄ້າໂດຍລວມ)

Model: OLS by Stepwise method, $R^2$=0.601; N=160, F=38.476 (Sig.=0.0000)